ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານລາຍງານການເງິນກາງປີແບບແຍກກິດຈະການ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ບົດລາຍງານທົບທວນຄືນເອກະສານລາຍງານການເງິນການປີແບບແຍກກິດຈະການ	5 - 6
ໃບລາຍງານຖານະການເງິນການປີແບບແຍກກິດຈະການ	7 - 8
ໃບລາຍງານຜົນການດຳເນີນງານການປີແບບແຍກກິດຈະການ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປີແບບແຍກກິດຈະການ	10
ໃບລາຍງານກະແສເງິນສົດການປີແບບແຍກກິດຈະການ	11-12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນການປີແບບແຍກກິດຈະການ	13 - 40

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊີມັ່ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ່ງ ລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນ ດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ ຕລຊລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດ ຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍ ສິ່ງ ແລະ ການຂາຍຍ່ອຍຊີມັ່ງ ແລະ ຜະລິດຕະພັນຊີມັ່ງອື່ນໆທີ່ກ່ຽວຂ້ອງ ມາເປັນການທ່ອງທ່ຽວ (ຂາເຂົ້າ - ຂາອອກ) ແລະ ການກໍ່ສ້າງ ຕຶກອາຄານຄອນໂດສຳລັບຈຳໜ່າຍ.

ວັນທີ 30 ຕຸລາ 2023, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 3330/ຈທວ ຈາກກະຊວງອຸດສາຫະກຳ ແລະ ການ ຄ້າ ໄດ້ອອກໃບທະບຽນວິສາຫະກິດສຳຫຼັບການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ່ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ວັນທີ 24 ມິຖຸນາ 2025, ບໍລິສັດໄດ້ຮັບໃບອະນຸຍາດດຳເນີນທຸລະກິດຄອນໂດມິນຽມຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຊິ່ງໄດ້ອະນຸຍາດໃຫ້ບໍລິສັດດຳເນີນກິດຈະການທີ່ກ່ຽວຂ້ອງກັບຄອນໂດມິນຽມເພື່ອຂາຍ.

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 30 ມິຖຸນາ 2025 ມີລາຍລະອຽດດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັ້ນ*
Yunnan Hengshi Chengrui Holdings Co., Ltd (ກ່ອນໜ້ານີ້ແມ່ນໃນນາມ Yunnan Qianhan Technology Network Limited ("Yunnan Qianhan")	14,280,000	35.696%
ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34.297%
ບໍລິສັດ ຫຼັກຊັບລາວ - ຈີນ ຈຳກັດ (LCS)	7,547,800	18.868%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,456,200	11.139%
	40,004,000	

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງ ມີໂຮງງານຊີມັ່ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ພາຍໃນໄລຍະເວລາຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ເນັຍ ເຫຼັຍ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວັນທອງ ສິດທິກຸນ	ຮອງປະທານ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020
ທ່ານ ສິນທະນູ ສີມພອງບຸດຕະຂັນ	ຮອງປະທານ	ແຕ່ງຕັ້ງນະວັນທີ 28 ມິຖຸນາ 2024
ທ່ານ ຈ່ຳງ ຈິ່ງຫົວ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ນາງ ຊ້ຳຍ ຫລິງຫລິງ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕົ້ງ ຢູ່ຕົ້ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 05 ພະຈິກ 2024
ທ່ານ ນາງ ສີ ຢູຫົ້ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024
ທ່ານ ຄຳບົນ ໄຊເລົ່າວົ້ງ	ສະມາຊິກ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020
ທ່ານ ໄຕ ຫຼົ້ງຫົວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ທ່ານ ຫລິວ ຮ້າວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ວິຄຳແດງ ອິນທະໄຊ	ສະມາຊິກ	ແຕ່ງຕັ້ງນະວັນທີ 28 ສິງຫາ 2024

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງບໍລິສັດ ພາຍໃນໄລຍະເວລາຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ເນັຍ ເຫຼັຍ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຕົ້ງ ຢູ່ຕົ້ງ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 05 ພະຈິກ 2024
ທ່ານ ຈ່ຳງ ຈິ່ງຫົວ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຄຳບົນ ໄຊເລົ່າວົ້ງ	ຜູ້ອຳນວຍການ	ແຕ່ງຕັ້ງນະວັນທີ 23 ມິຖຸນາ 2020

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນໄລຍະເວລາຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ໄຕ ຫຼົ້ງຫົວ	ປະທານ	ແຕ່ງຕັ້ງນະວັນທີ 09 ມີນາ 2023
ທ່ານ ຫລິວ ຮ້າວ	ສະມາຊິກ	ແຕ່ງຕັ້ງນະວັນທີ 09 ມີນາ 2023

ຂໍ້ມູນທົ່ວໄປ (ຕໍ່)

ຜູ້ຕາງໜ້າທາງດ້ານກົດໝາຍ

ຜູ້ຕາງໜ້າທາງດ້ານກົດໝາຍຂອງບໍລິສັດພາຍໃນໄລຍະເວລາຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025 ແລະ ນະວັນທີມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ເນ້ຍ ເຫຼຍ ຜູ້ອຳນວຍການໃຫຍ່ ແລະ ປະທານສະພາບໍລິຫານ.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນ ແອນ ຢັ້ງ ລາວຈຳກັດ.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ (“ບໍລິສັດ”) ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນ ແລະ ເອກະສານລາຍງານການເງິນແບບແຍກກິດຈະການສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນກ່ຽວກັບແບບແຍກກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການ ເຊິ່ງຖືກກະກຽມອີງຕາມນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນແບບແຍກກິດຈະການ, ຜົນຂອງການດຳເນີນງານແບບແຍກກິດຈະການ ແລະ ກະແສເງິນສົດແບບແຍກກິດຈະການຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນແບບແຍກກິດຈະການ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕາມມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນແບບແຍກກິດຈະການບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງບໍລິສັດຢ່າງສົມເຫດສົມຜົນຕະຫຼອດເວລາ, ກ່ຽວກັບຖານະທາງການເງິນແບບແຍກກິດຈະການຂອງບໍລິສັດ ແລະ ຮັບປະກັນວ່າເອກະສານລາຍງານການເງິນແບບແຍກກິດຈະການແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະອຳນວຍການຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການ ມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນແບບແຍກກິດຈະການແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ.

ໃນນາມຂອງຄະນະອຳນວຍການ:

_____

ທ່ານ ເນ້ຍ ເຫຼຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນ ແລະ ເອກະສານລາຍງານການເງິນແບບແຍກກິດຈະການສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນການປິແບບແຍກກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການ ເຊິ່ງຖືກກະກຽມອີງຕາມນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນແບບແຍກກິດຈະການ, ຜົນຂອງການດຳເນີນງານແບບແຍກກິດຈະການ ແລະ ກະແສເງິນສົດແບບແຍກກິດຈະການຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະລາຍງານການເງິນແບບແຍກກິດຈະການ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕາມມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນແບບແຍກກິດຈະການບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງບໍລິສັດຢ່າງສົມເຫດສົມຜົນຕະຫຼອດເວລາ, ກ່ຽວກັບຖານະທາງການເງິນແບບແຍກກິດຈະການຂອງບໍລິສັດ ແລະ ຮັບປະກັນວ່າເອກະສານລາຍງານການເງິນແບບແຍກກິດຈະການແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະອຳນວຍການຂອງບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການ ມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນແບບແຍກກິດຈະການແມ່ນໄດ້ກະກຽມຖືກຕ້ອງຕາມຄວາມເປັນຈິງ ສອດຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ.

ໃນນາມຂອງຄະນະອຳນວຍການ:

ທ່ານ ເນັຍ ເຫຼຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ເລກທີອ້າງອີງ: 11728747/ E-69207199-LR

ບົດລາຍງານການທົບທວນຄືນເອກະສານລາຍງານການເງິນກາງປີແບບແຍກກິດຈະການ

ຮຽນ : ຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ທີ່ນັບຖື

ຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນເອກະສານລາຍງານຖານະການເງິນກາງປີຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ນະວັນທີ 30 ມິຖຸນາ 2025, ແລະ ໃບລາຍງານຜົນການດຳເນີນງານກາງປີ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງກາງປີ ແລະ ໃບລາຍງານກະແສເງິນສົດກາງປີ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດສະຫຼຸບຂອງບັນດານະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍເລກທີຕ່າງໆ ຕາມທີ່ລະບຸໄວ້ໃນໜ້າທີ 6 ຫາ ໜ້າທີ 32.

ຄະນະບໍລິຫານ ຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນກາງປີ ໂດຍສອດຄ່ອງກັບນະໂຍບາຍທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍເລກທີ 3 ໃນເອກະສານລາຍງານການເງິນກາງປີ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນເພື່ອສະແດງຂໍ້ສະຫຼຸບກ່ຽວກັບຂໍ້ມູນທາງດ້ານການເງິນກາງປີນີ້ໂດຍອີງໃສ່ການທົບທວນຄືນຂອງພວກຂ້າພະເຈົ້າ.

ຂອບເຂດຂອງການທົບທວນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານສາກົນວ່າດ້ວຍການບໍລິການທົບທວນຄືນເລກທີ 2410, "ການທົບທວນຄືນຂໍ້ມູນທາງການເງິນກາງປີໄດ້ປະຕິບັດໂດຍນັກກວດສອບອິດສະຫຼະຂອງບໍລິສັດ". ການທົບທວນຄືນຂອງເອກະສານລາຍງານການເງິນກາງປີ ປະກອບດ້ວຍການສອບຖາມປະຕິບັດການເບື້ອງຕົ້ນກັບບຸກຄົນທີ່ຮັບຜິດຊອບກ່ຽວກັບການເງິນ ແລະ ການບັນຊີທີ່ສຳຄັນ, ແລະ ນຳໃຊ້ຂັ້ນຕອນການວິເຄາະ ແລະ ວິທີການທົບທວນຄືນອື່ນໆ. ການທົບທວນຄືນນີ້ມີຂອບເຂດແຂບກວ່າການດຳເນີນການກວດສອບທີ່ອີງຕາມມາດຕະຖານສາກົນດ້ານການກວດສອບ ແລະ ດ້ວຍເຫດນີ້, ພວກຂ້າພະເຈົ້າບໍ່ສາມາດຮັບປະກັນໄດ້ວ່າຈະພົບເຫັນບັນຫາທີ່ສຳຄັນທັງໝົດຄືກັນກັບການດຳເນີນການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ໄດ້ອອກຄຳເຫັນ ສຳລັບການກວດສອບ.

Building a better working world

ພື້ນຖານຂອງການງົດອອກຄຳເຫັນ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນແບບແຍກກິດຈະການ, ທີ່ໄດ້ລະບຸວ່າ ບໍລິສັດຂາດທຶນສຸດທິກ່ອນອາກອນມູນຄ່າ 13.55 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025. ນະວັນທີສິ້ນສຸດດັ່ງກ່າວ, ບໍລິສັດ ມີຍອດຂາດທຶນສະສົມມູນຄ່າ 93.40 ຕື້ກີບ ແລະ ມີໜີ້ສິນໝຸນວຽນມູນຄ່າ 98.23 ຕື້ກີບ ເຊິ່ງເກີນຊັບສິນໝຸນວຽນ 50.93 ຕື້ກີບ. ສະພາບການດັ່ງກ່າວ ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດຂໍ້ສົງໄສ ກ່ຽວກັບຄວາມສາມາດໃນການສືບເນື່ອງໃນ ການດຳເນີນທຸລະກິດຂອງບໍລິສັດ. ເອກະສານລາຍງານການເງິນແບບແຍກກິດຈະການ ສຳລັບປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025 ຕ້ອງ ຖືກກະກຽມບົນພື້ນຖານການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ ອີງໃສ່ຂໍ້ສົມມຸດຖານວ່າບໍລິສັດມີຊັບພະຍາກອນພຽງພໍ ໃນ ການຊຳລະໜີ້ສິນໃຫ້ກັບບຸກຄົນທີສາມ ແລະ ພຽງພໍສຳລັບການດຳເນີນງານໃນປີຖັດໄປໄດ້ ໂດຍປາສະຈາກຂໍ້ຈຳກັດຕ່າງໆ. ບໍລິສັດໄດ້ ກະກຽມ ໃບລາຍງານຄາດການກະແສເງິນສົດ ທີ່ສະແດງເຖິງແຜນການຊຳລະ ແລະ ແຜນການດຳເນີນງານ, ໂດຍອີງໃສ່ຄວາມຄາດຫວັງ ຂອງບໍລິສັດ ທີ່ຈະໄດ້ຮັບການສະໜັບສະໜຸນທາງການເງິນ ຈາກຜູ້ຖືຮຸ້ນ. ອີງຕາມຂໍ້ມູນທີ່ພວກຂ້າພະເຈົ້າມີຢູ່, ພວກຂ້າພະເຈົ້າ ບໍ່ ສາມາດເກັບກຳຫຼັກຖານຂອງການກວດສອບທີ່ພຽງພໍ ທີ່ຈະສາມາດຢັ້ງຢືນຂໍ້ສົມມຸດຖານຂອງຄະນະອຳນວຍການຂອງບໍລິສັດ ໃນການ ກະກຽມໃບລາຍງານຄາດການກະແສເງິນສົດດັ່ງກ່າວ. ດັ່ງນັ້ນ, ພວກຂ້າພະເຈົ້າ ຈຶ່ງບໍ່ສາມາດມີຄວາມໝັ້ນໃຈ ກ່ຽວກັບຄວາມເໝາະສົມ ຂອງການນຳໃຊ້ຂໍ້ສົມມຸດຖານ ການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ ເຂົ້າໃນການກະກຽມເອກະສານລາຍງານການເງິນ ແບບແຍກກິດຈະການ ສຳລັບໄລຍະຫົກເດືອນຕົ້ນປີ ວັນທີ 30 ມິຖຸນາ 2025.

ການສະຫຼຸບຂອງການງົດອອກຄຳເຫັນ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ ເນື່ອງຈາກຄວາມສຳຄັນຂອງບັນຫາທີ່ອະທິບາຍໄວ້ໃນວັກພື້ນຖານໃນການງົດອອກຄຳ ຄິດເຫັນ, ເອກະສານລາຍງານການເງິນການປີເຫຼົ່ານີ້ແມ່ນບໍ່ໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍບັນຊີໄດ້ອະທິບາຍໄວ້ໃນບົດ ອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນການປີແບບແຍກກິດຈະການ.

ບັນຫາທີ່ຄວນເອົາໃຈໃສ່ – ນະໂຍບາຍບັນຊີ

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນການປີແບບແຍກກິດຈະການ ທີ່ໄດ້ ລະບຸ ວ່າ ບົດລາຍງານການເງິນການປີແບບແຍກກິດຈະການທີ່ໄດ້ອະທິບາຍເຖິງນະໂຍບາຍການບັນຊີທີ່ນຳຖືກນຳໃຊ້. ນະໂຍບາຍບັນຊີ ດັ່ງກ່າວ ບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະການເງິນການປີແບບແຍກກິດຈະການ, ຜົນການດຳເນີນງານການປີແບບແຍກກິດຈະການ ແລະ ກະແສເງິນສົດການປີແບບແຍກກິດຈະການໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ການສະຫຼຸບຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

ຕາງໜ້າ ແລະ ໃນນາມບໍລິສັດ ເອິນ ແອນ ຢັ ງ ລາວ ຈຳກັດ

ທ່ານ ວັນ ເລ
ຮຸ້ນສ່ວນ

ໃບອະນຸຍາດດຳເນີນການກວດສອບ
ເລກທີ 018/LCPAA APT-29

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

A member firm of Ernst & Young Global Limited

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນການປິແບບແຍກກິດຈະການ
ນະວັນທີ 30 ມິຖຸນາ 2025

	ບົດອະທິບາຍ ເລກທີ	*30 ມິຖຸນາ 2025 ກີບ*	*31 ທັນວາ 2024 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	664,259,005	762,996,896
ຊັບສິນພວມກໍ່ສ້າງ	6	11,972,357,859	30,673,610,031
ຊັບສິມບັດຄົງທີ່ບໍ່ມີຕົວຕົນ	5	3,677,601,875	3,681,415,835
ການລົງທຶນໃນບໍລິສັດໃນເຄືອ	7	5,849,064,057	5,203,557,146
ລວມຊັບສິນບໍ່ໝຸນວຽນ		**22,163,282,796**	**40,321,579,908**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	8	6,068,375,475	4,322,776,548
ເຄື່ອງໃນສາງ	9	31,265,691,782	12,324,012,453
ໜີ້ຕ້ອງຮັບຈາກພາກສ່ວນອື່ນທີ່ກ່ຽວຂ້ອງ	22	4,113,320,606	2,847,957,610
ໜີ້ຕ້ອງຮັບທາງການຄ້າ	10	1,548,047,116	1,656,111,790
ເງິນສົດ	11	4,305,535,101	574,997,658
ລວມຊັບສິນໝຸນວຽນ		**47,300,970,080**	**21,725,856,059**
ລວມຊັບສິນທັ້ງໝົດ		**69,464,252,876**	**62,047,435,966**

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນການປິແບບແຍກກິດຈະການ (ຕໍ່)
ນະວັນທີ 30 ມິຖຸນາ 2025

	ບົດອະທິບາຍ ເລກທີ	*30 ມິຖຸນາ 2025 ກີບ*	*31 ທັນວາ 2024 ກີບ*
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ	12	7,340,987,971	8,025,747,856
ເງິນລ່ວງໜ້າຈາກລູກຄ້າ	13	25,580,477,314	12,440,807,689
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ອື່ນທີ່ກ່ຽວຂ້ອງ	22	11,968,699,773	12,887,018,084
ພັນທະອາກອນ	14	8,627,882,884	8,152,671,650
ໜີ້ຕ້ອງສົ່ງໃຫ້ພະນັກງານ		12,154,177,570	11,074,331,574
ໜີ້ຕ້ອງສົ່ງອື່ນໆ	15	32,553,348,422	24,682,695,701
ລວມໜີ້ສິນໝຸນວຽນ		**98,225,573,934**	**77,263,272,554**
ລວມໜີ້ສິນທັງໝົດ		**98,225,573,934**	**77,263,272,554**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	16	20,002,000,000	20,002,000,000
ສ່ວນເພີ່ມມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(93,402,814,711)	(79,857,330,240)
ລວມທຶນ		**(28,761,321,058)**	**(15,215,836,587)**
ລວມໜີ້ສິນ ແລະ ທຶນທັງໝົດ		**69,464,252,876**	**62,047,435,967**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ທ່ານ ເນ້ຍ ເຫຼຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານການເງິນແບບແຍກກິດຈະການ
ສຳລັບປີໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ນະວັນທີ 30 ມິຖຸນາ 2025

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ2025 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	17	33,250,200	1,298,133,934
ລາຍຈ່າຍຈາກການດຳເນີນງານອື່ນໆ	18	(5,795,983,779)	(1,078,066,880)
ລາຍຈ່າຍໃນການບໍລິຫານ	19	(6,912,784,123)	(7,216,752,766)
ຂາດທຶນຈາກການດຳເນີນງານ		**(12,675,517,702)**	**(6,996,685,712)**
ລາຍຮັບທາງການເງິນ	19	64,297	68,262
ຕົ້ນທຶນທາງການເງິນ	20	(870,031,066)	(687,732,856)
ຂາດທຶນກ່ອນອາກອນ		**(13,545,484,471)**	**(7,684,350,306)**
ລາຍຈ່າຍອາກອນກຳໄລ	21	-	-
ຂາດທຶນສຸດທິຫຼັງອາກອນພາຍໃນປີ		**(13,545,484,471)**	**(7,684,350,306)**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ທ່ານ ເນັຍເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ຳ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປີແບບແຍກກິດຈະການ
ສຳລັບປີໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025

	ທຶນຈົດທະບຽນທີ່ໄດ້ຖອກແລ້ວ *ກີບ*	*ສ່ວນເພີ່ມມູນຄ່າຮຸ້ນ* *ກີບ*	*ຄ້າງສຳຮອງຕາມລະບຽບການ* *ກີບ*	*ຄ້າງສຳຮອງເພື່ອຂະຫຍາຍອາຄານ* *ກີບ*	*ຂາດທຶນສະສົມ* *ກີບ*	*ລວມທັງໝົດ* *ກີບ*
ນະວັນທີ 1 ມັງກອນ 2024	20,002,000,000	18,385,975,511	7,704,052,546	18,549,465,596	(75,063,175,913)	(10,421,682,260)
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(7,684,350,306)	(7,684,350,306)
ນະວັນທີ 30 ມິຖຸນາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(82,747,526,219)**	**(18,106,032,566)**
ນະວັນທີ 1 ມັງກອນ 2025	20,002,000,000	18,385,975,511	7,704,052,546	18,549,465,596	(79,857,330,240)	(15,215,836,587)
ຂາດທຶນສຸດທິພາຍໃນໄລຍະ	-	-	-	-	(13,545,484,471)	(13,545,484,471)
ນະວັນທີ 30 ມິຖຸນາ 2025	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(93,402,814,711)**	**(28,761,321,058)**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ທ່ານ ເມ້ຍ ເຫຼີຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານກະແສເງິນສົດກາງປີແບບແຍກກິດຈະການ
ສຳລັບປີໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025

	ຍົກອະທິບາຍ ເລກທີ	*ສຳລັບຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ກີບ*	*ສຳລັບຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(13,545,484,471)**	**(7,684,350,306)**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	203,030,232	185,887,051
ເງິນແຮ/(ເກັບຄືນເງິນແຮ)ສຳລັບເຄື່ອງໃນສາງ	16	4,214,300,610	(5,474,210)
ເກັບຄືນເງິນແຮສຳລັບໜີ້ທວງຍາກ	16	(27,286,200)	(8,066,000)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		(276,776,532)	898,676,742
ກຳໄລຈາກກິດຈະກຳການລົງທຶນ		-	(523,364,486)
ລາຍຈ່າຍດອກເບ້ຍ		549,650,963	-
ການດັດແກ້ທຶນໝຸນວຽນ:			
ເພີ່ມຂຶ້ນຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນທີ່ກ່ຽວຂ້ອງ		(1,128,354,145)	(979,057,111)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(1,745,663,229)	(2,175,654,706)
ເພີ່ມຂຶ້ນຂອງເຄື່ອງໃນສາງ		(1,759,622,643)	(4,405,982,954)
ເພີ່ມຂຶ້ນຂອງໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ພາກສ່ວນທີ່ກ່ຽວຂ້ອງ		13,949,474,056	9,025,662,707
ລາຍຮັບດອກເບ້ຍ		64,297	68,262
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**433,332,938**	**(5,564,623,468)**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(100,478,381)	(587,256,936)
ເງິນສົດຈາກການຂາຍຊັບສິນບັດຖິ່ງທີ່		-	523,364,486
ການລົງທຶນກັບບໍລິສັດໃນເຄືອ		(645,506,911)	(912,678,642)
ຊັບສິນພວມກໍ່ສ້າງ		(2,695,105,123)	-
ກະແສເງິນສົດສຸດທິຈາກກິດຈະກຳການລົງທຶນ		**(3,441,090,415)**	**(976,571,092)**

	ບົດອະທິບາຍ ເລກທີ	ສຳລັບຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	ສຳລັບຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ກີບ
ກິດຈະກຳການເງິນ			
ເພີ່ມເງິນກູ້ຢືມ		7,643,255,000	5,517,375,000
ຈ່າຍເງິນກູ້ຢືມ		(861,532,972)	(174,920,654)
ກະແສເງິນສົດສຸດທິຈາກກິດຈະກຳການເງິນ		**6,781,722,029**	**5,342,454,346**
ເງິນສົດເພີ່ມຂຶ້ນ/(ຫຼຸດລົງ)ສຸດທິ		3,773,964,552	(1,305,771,757)
ເງິນສົດໃນຕົ້ນໄລຍະ		574,997,658	1,606,207,716
ຜົນກະທົບຈາກຄວາມຜັນຜວນຂອງອັດຕາ ແລກປ່ຽນ		(43,427,109)	19,841,544
ເງິນສົດໃນທ້າຍໄລຍະ	**11**	**4,305,535,101**	**320,277,503**

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ
Lao Culture Tourism Public Group Company

ທ່ານ ເມ້ຍ ເຫຼ້ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025

ປົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີແບບແຍກກິດຈະການ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025

1. ຂໍ້ມູນບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ຊີມັ່ງລາວ ມະຫາຊົນ ແລະ ບໍລິສັດ ຊີມັ່ງລາວ ຈຳກັດ ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໃບຢັ້ງຢືນການສະເໜີຂາຍຮຸ້ນຕໍ່ສາທາລະນະຄັ້ງທຳອິດເລກທີ 0008/ຕລຊລ ອອກ ໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດ ຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "LCTC") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກ ການຜະລິດ, ການຂາຍສິ່ງ ແລະ ການຂາຍຍ່ອຍຊີມັ່ງ ແລະ ຜະລິດຕະພັນຊີມັ່ງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ບໍລິການ ການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ.

ວັນທີ 30 ຕຸລາ 2023, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດ ເລກທີ 3330/ຈທອ ສຳຫຼັບ ການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັ່ງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.

ວັນທີ 24 ມິຖຸນາ 2025, ບໍລິສັດໄດ້ຮັບໃບອະນຸຍາດດຳເນີນທຸລະກິດຄອນໂດມິນຽມຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຊິ່ງໄດ້ອະນຸຍາດໃຫ້ບໍລິສັດດຳເນີນກິດຈະການທີ່ກ່ຽວຂ້ອງກັບຄອນໂດມິນຽມເພື່ອຂາຍ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັ່ງວັ້ງວຽງ ຫຼັງ 2 ຢູ່ເມືອງວັ້ງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 30 ມິຖຸນາ 2025, ບໍລິສັດມີພະນັກງານ 59 ຄົນ (30 ມິຖຸນາ 2024: ພະນັກງານ 53 ຄົນ)

1. ຂໍ້ມູນບໍລິສັດ (ຕໍ່)

ບໍລິສັດໃນເຄືອ

ນະວັນທີ 30 ມິຖຸນາ 2025, ບໍລິສັດມີ ບໍລິສັດໃນເຄືອທັງໝົດ 8 ບໍລິສັດທີ່ມີຂໍ້ມູນທາງການເງິນ ດັ່ງຕໍ່ໄປນີ້:

ຊື່ບໍລິສັດ	*ໃບທະບຽນວິສາຫະກິດເລກທີ.*	*ປະເພດທຸລະກິດ*	*% ເປັນເຈົ້າຂອງໂດຍ LCTC*
ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ	ເລກທີ 2118/ຈທອ ລົງວັນທີ 17 ມິຖຸນາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການຈຳໜ່າຍພືດສະໜຸນໄພເພື່ອສົ່ງອອກ, ປູກເພື່ອຂາຍພາຍໃນ ແລະ ສົ່ງອອກ	100%
ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດຜູ້ດຽວ	ເລກທີ 2434.ຈທອ ລົງວັນທີ 05 ກໍລະກົດ 2024 ອອກ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການບໍລິການທີ່ປຶກສາດ້ານການກໍ່ສ້າງ	100%
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ	ເລກທີ 2422/ຈທອ ລົງວັນທີ 10 ສິງຫາ 2023 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ວັດສະດຸການກໍ່ສ້າງ ແລະ ເຄື່ອງມືອຸປະກອນ	100%
ບໍລິສັດ ສະຖາປັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 3113/ຈທອ ລົງວັນທີ 26 ກັນຍາ 2023 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການອອກແບບອາຄານ, ການອອກແບບ ການທ່ອງທ່ຽວ, ອອກແບບ ແລະ ກໍ່ສ້າງ ວຽກງານສາທາລະນະ	100%
ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ	ເລກທີ 0414/ຈທອ ລົງວັນທີ 01 ກຸມພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການຜະລິດສື່ບັນເທີງ, ຮູບເງົາ ແລະ ການ ໂຄສະນາ	100%
ບໍລິສັດ ພັດທະນາຊັບພະຍາກອນແຮ່ລາວ ຈຳກັດ	ເລກທີ 0767/ຈທອ ລົງວັນທີ 29 ກຸມພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຂຸດຄົ້ນ ແລະ ສຳຫຼວດພື້ນທີ່ຂຸດຄົ້ນບໍ່ແຮ່	100%
ບໍລິສັດ ສະຖາປັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 1495/ຈທອ ລົງວັນທີ 06 ພຶດສະພາ 2024 ອອກ ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.	ການສຳຫຼວດ ແລະ ການອອກແບບອາຄານ	100%
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	ເລກທີ 1485/ຈທອ ລົງວັນທີ 06 ພຶດສະພາ 2024 ອອກ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການທີ່ປຶກສາທາງດ້ານການສຶກສາ	100%

2. ພື້ນຖານຂອງການກະກຽມ

ອີງຕາມກົດໝາຍວ່າດ້ວຍບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາໜ່ວຍງານສາທາລະນະ ປະໂຫຍດ ລວມທັງບໍລິສັດຈົດທະບຽນຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ (“IFRS”) ໃນການກະກຽມ ລາຍງານການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງລັດຖະການ. ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ໂດຍກະຊວງການເງິນ, ຫົວໜ່ວຍຖືພົ້ນປະໂຫຍດສາທາລະນະ ໄດ້ອະນຸຍາດໃຫ້ເລື່ອນເວລາການສະໝັກ IFRS ໄປຈົນເຖິງວັນທີ 1 ມັງກອນ 2026.

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025, ບໍລິສັດ ແມ່ນໄດ້ຖືກກະກຽມເອກະສານລາຍງານການເງິນ ແບບແຍກກິດຈະການໂດຍສອດຄ່ອງກັບນະໂຍບາຍການບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງ ເອກະສານ ລາຍງານການເງິນແບບແຍກກິດຈະການ. ນະໂຍບາຍການບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນ ແບບແຍກກິດຈະການ, ຜົນຂອງການດຳເນີນງານແບບແຍກກິດຈະການ ແລະ ກະແສເງິນສົດແບບແຍກກິດຈະການຂອງ ບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບທົ່ວໄປ.

ເອກະສານລາຍງານການເງິນແບບແຍກກິດຈະການຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນແບບແຍກກິດຈະການສະບັບນີ້ ແມ່ນຖືກລາຍງານເປັນສະກຸນເງິນກີບລາວ (“ກີບ”). ເຊິ່ງເປັນ ສະກຸນເງິນຫຼັກທີ່ນຳໃຊ້ໃນການເຮັດທຸລະກຳ ແລະ ຊຳລະສະສາງຂອງບໍລິສັດ.

ມາຮອດວັນທີ 31 ທັນວາ 2024, ອັດຕາເງິນເຟີ້ສະສົມໃນ ສປປ ລາວ ໃນໄລຍະ 36 ເດືອນຜ່ານມາໄດ້ກາຍ 100%, ການ ຈັດປະເພດປະເທດເປັນເສດຖະກິດທີ່ມີອັດຕາເງິນເຟີ້ສູງ, ອີງຕາມການລາຍງານຂອງ ທະນາຄານແຫ່ງ ສປປ ລາວ (https://www.bol.gov.la/en/inflation). ມາຮອດວັນທີ 30 ມິຖຸນາ 2025, ອັດຕາເງິນເຟີ້ສະສົມໃນໄລຍະ 36 ເດືອນ ຜ່ານມາໄດ້ຫຼຸດລົງເຖິງ 74%, ແນວໃດກໍ່ຕາມ, ເພື່ອກຳນົດວ່າສະກຸນເງິນຈະຢຸດເຊົາເປັນທ່າອ່ຽງຂອງອັດຕາເງິນເຟີ້ສູງ ແລະ ການທົບທວນຕໍ່ໄປເຖິງທ້າຍປີ 2025. ດັ່ງນັ້ນ, ບໍລິສັດບໍ່ໄດ້ປະຕິບັດນະໂຍບາຍການບັນຊີໃດໆເພື່ອແກ້ໄຂຜົນກະທົບຂອງ hyperinflation ສະເພາະຂອງລາວ. ມາດຕະຖານການລາຍງານ (“FRS”) ແລະ ກະຊວງການເງິນ (“MOF”) ກ່ຽວກັບເລື່ອງ ນີ້.

ຂໍ້ສົມມຸດຖານກ່ຽວກັບຄວາມສົບເນື່ອງຂອງການດຳເນີນທຸລະກິດ

ບໍລິສັດໄດ້ຂາດທຶນສຸດທິມູນຄ່າ 13.55 ຕື້ກີບ ສຳລັບຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025. ນະວັນທີດັ່ງກ່າວ, ບໍລິສັດມີຍອດ ຂາດທຶນສະສົມມູນຄ່າ 93.40 ຕື້ກີບເກີນທຶນຈົດທະບຽນຈຳນວນ 73.40 ຕື້ກີບ, ແລະ ໜີ້ສິນໝຸນວຽນຂອງ ບໍລິສັດຫຼາຍກວ່າຊັບສິນໝຸນວຽນຈຳນວນ 50.93 ຕື້ກີບ. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ ບຊລ ກ່ຽວກັບການຢຸດຜະລິດຊົ່ວຄາວຈົນກວ່າຈະມີແຈ້ງການຄັ້ງຕໍ່ໄປ. ບໍລິສັດໄດ້ປັບປ່ຽນການເຄື່ອນໄຫວທຸລະກິດຫຼັກໃຫ້ ສອດຄ່ອງກັບໃບອະນຸຍາດການລົງທຶນສະບັບເລກທີ 119.2023/ກຜທ ລົງວັນທີ 02 ພຶດສະພາ 2023 ອອກໂດຍກະຊວງ ແຜນການ ແລະ ການລົງທຶນ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສິ່ງ ແລະ ການຂາຍຍ່ອຍຊີມັງ ແລະ ຜະລິດຕະພັນຊີມັງອື່ນໆທີ່ ກ່ຽວຂ້ອງ ມາເປັນການໃຫ້ການບໍລິການການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດ ສຳລັບຈຳໜ່າຍ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດ ເກີດການສົງໄສຢ່າງໃຫຍ່ຫຼວງ ກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

2. ພື້ນຖານຂອງການກະກຽມ (ຕໍ່)

ຂໍ້ສົມມຸດຖານກ່ຽວກັບຄວາມສົບເນື່ອງຂອງການດຳເນີນທຸລະກິດ

ຄະນະອຳນວຍການຂອງບໍລິສັດໄດ້ກະກຽມການຄາດຄະເນກະແສເງິນສົດເພື່ອສະໜັບສະໜຸນການຊຳລະສະສາງ ແລະ ແຜນການດຳເນີນງານສຳລັບ 12 ເດືອນຂ້າງໜ້າ, ໂດຍອີງໃສ່ບົນພື້ນຖານຄວາມຄາດຫວັງ (i) ຈາກການສະ ໜັບສະໜຸນທາງ ການເງິນຂອງຜູ້ຖືຮຸ້ນ ແລະ (ii) ຄວາມສາມາດໃນການຮັບເງິນການຂາຍຊັບສິນ. ຜູ້ບໍລິຫານຂອງບໍລິສັດໄດ້ຮັບເອກະສານສະ ໜັບສະໜຸນທາງການເງິນຈາກຢູນນານ ເຫີງຊີ ເຊິ່ງເປັນຜູ້ຖືຮຸ້ນລາຍໃຫຍ່ເຊິ່ງໄດ້ກຳນົດໃນຂໍ້ຕົກລົງໃນການສະໜອງການ ຊ່ວຍເຫຼືອທາງການເງິນໃຫ້ມີຄວາມພຽງພໍຕໍ່ການສະສາງໜີ້ສິນເມື່ອຄົບກຳນົດໃນການຊຳລະໃນປີຕໍ່ໄປໂດຍບໍ່ມີການ ຫຼຸດຜ່ອນ. ບົນພື້ນຖານນີ້, ຄະນະອຳນວຍການຂອງບໍລິສັດຍັງຕ້ອງພິຈາລະນາຄວາມເໝາະສົມທີ່ກະກຽມເອກະສານລາຍງານ ການເງິນແບບແຍກກິດຈະການຂອງບໍລິສັດບົນພື້ນຖານຄວາມສົບເນື່ອງຂອງການດຳເນີນທຸລະກິດ.

ອີງຕາມເອກະສານລາຍງານທາງການເງິນແບບແຍກກິດຈະການຈະບໍ່ລວມການດັດແກ້ໃດໆທີ່ອາດຈຳເປັນ ຖ້າຫາກບໍລິສັດບໍ່ ຄວາມສາມາດໃນການສົບເນື່ອງຂອງການດຳເນີນທຸລະກິດ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

ຊັບສິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຽຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍ ກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການ ເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

ເມື່ອລາຍການຂອງຊັບສິນ, ອາຄານ ແລະ ອຸປະກອນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼ້ຽຫ້ຽນສະສົມ ແມ່ນຈະຖືກ ຕັດອອກຈາກໃບລາຍງານຖານະການເງິນແບບແຍກກິດຈະການ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະ ຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ ຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງ ອື່ນໆ.

ຊັບສິນ, ອາຄານ ແລະ ອຸປະກອນ ທີ່ຖືກຫັກຄ່າຫຼ້ຽຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະ ບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼ້ຽຫ້ຽນທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການອີກ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຄ່າຫຼຸ້ຍຫ້ຽນ (ຕໍ່)

ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນແມ່ນນຳໃຊ້ວິທີຄິດໄລ່ແບບສະໝ່ຳສະເໝີຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ອື່ນໆ	10 ປີ

ອາຍຸການໃຊ້ງານຂອງການປັບປຸງສິດທິໃນການເຊົ່າ ແມ່ນຖືກກຳນົດໂດຍການຄາດການຝ່າຍອຳນວຍການກ່ຽວກັບການໃຊ້ງານ ແລະ ອາດຈະແຕກຕ່າງກັບໄລຍະເວລາຂອງສັນຍາ.

ການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ເພີ່ມຫຼື ສະສາງອອກພາຍໃນໄລຍະ ແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະສາງອອກຕົວຈິງ. ບໍ່ມີການຫັກຄ່າຫຼຸ້ຍຫ້ຽນສຳລັບຊັບສິນພວມກໍ່ສ້າງຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບັດຄຶງທີ່ບໍ່ມີຕົວຕົນ

ຊັບສິນບັດຄຶງທີ່ບໍ່ມີຕົວຕົນ ປະກອບດ້ວຍ ຊອບແວຄອມພິວເຕີ ແລະ ສິດນຳໃຊ້ທີ່ດິນ. ຕົ້ນທຶນຂອງຊອບແວປະກອບດ້ວຍ ລາຄາຊື້ ບວກໃຫ້ກັບຕົ້ນທຶນໂດຍກົງຕ່າງໆທີ່ຈະເຮັດໃຫ້ຊອບແວສາມາດເຮັດວຽກໄດ້ຕາມຈຸດປະສົງການໃຊ້ງານ.

ສິດການນຳໃຊ້ທີ່ດິນ ຈະບໍ່ມີກຳນົດໄລຍະເວລາການນຳໃຊ້ ແລະ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນພວມກໍ່ສ້າງ

ຊັບສິນພວມກໍ່ສ້າງແມ່ນສະແດງເຖິງຄ່າໃຊ້ຈ່າຍຂອງການຊື້ຊັບສິນໃຫມ່ທີ່ຍັງບໍ່ທັນໄດ້ຕິດຕັ້ງຢ່າງເຕັມທີ່ ຫຼື ຄ່າໃຊ້ຈ່າຍໃນການກໍ່ສ້າງທີ່ຍັງບໍ່ທັນໄດ້ສຳເລັດສົມບຸນ. ຊັບສິນພວມກໍ່ສ້າງແມ່ນລະບຸໄວ້ໃນຄ່າໃຊ້ຈ່າຍ, ເຊິ່ງລວມເຖິງຄ່າໃຊ້ຈ່າຍທີ່ຈຳເປັນທັງຫມົດໃນການກໍ່ສ້າງ, ສ້ອມແປງ, ຂະຫຍາຍ, ຫຼື ປັບປຸງໂຄງການໃຫມ່ດ້ວຍເຕັກໂນໂລຢີ, ເຊັ່ນ: ຄ່າກໍ່ສ້າງ, ຄ່າເຄື່ອງມື ແລະ ອຸປະກອນ, ຄ່າໃຊ້ຈ່າຍໃນການຄຸ້ມຄອງໂຄງການ, ຄ່າໃຊ້ຈ່າຍທີ່ປຶກສາການກໍ່ສ້າງ, ແລະ ຄ່າໃຊ້ຈ່າຍໃນການກູ້ຢືມທີ່ສາມາດຫັກລົບໄດ້.

ຊັບສິນພວມກໍ່ສ້າງຈະຖືກໂອນເຂົ້າບັນຊີຊັບສິນຄົງທີ່ທີ່ເຫມາະສົມເມື່ອຊັບສິນເຫຼົ່ານີ້ຖືກຕິດຕັ້ງຢ່າງເຕັມສ່ວນ ຫຼື ໂຄງການກໍ່ສ້າງສຳເລັດສົມບຸນ, ແລະ ຄ່າຫຼຸ້ຍຫ້ຽນຂອງຊັບສິນເຫຼົ່ານີ້ຈະເລີ່ມຕົ້ນເມື່ອຊັບສິນພ້ອມສຳລັບການນຳໃຊ້ທີ່ມີຈຸດປະສົງ.

ຄ່າໃຊ້ຈ່າຍໃນການກໍ່ສ້າງຖືກຮັບຮູ້ເປັນລາຍຈ່າຍໃນເວລາທີ່ຄ່າໃຊ້ຈ່າຍດັ່ງກ່າວບໍ່ໄດ້ເປັນໄປຕາມເງື່ອນໄຂທີ່ຈະຮັບຮູ້ເປັນຊັບສິນຄົງທີ່.

ສັນຍາເຊົ່າ

ໃນການກຳນົດວ່າເປັນສັນຍາເຊົ່າ, ຫຼື ປະກອບດ້ວຍສັນຍາເຊົ່ານັ້ນ, ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນສະເພາະ ແລະ ການຕົກລົງທີ່ບົ່ງບອກເຖິງສິດໃນການໃຊ້ຊັບສິນ.

ບໍລິສັດໃນຖານະຜູ້ເຊົ່າ

ສັນຍາເຊົ່າ, ເຊິ່ງຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງຄວາມເປັນເຈົ້າຂອງລາຍການທີ່ເຊົ່າ ບໍ່ໄດ້ໂອນໄປຫາບໍລິສັດເປັນສາລະສຳຄັນຄືສັນຍາເຊົ່າດຳເນີນງານ. ເງິນທີ່ຈ່າຍຕາມສັນຍາເຊົ່າດຳເນີນງານຖືກຮັບຮູ້ເປັນລາຍຈ່າຍຢູ່ໃນໃບລາຍງານຜົນການດຳເນີນງານໂດຍວິທີເສັ້ນຊື່ຕະຫຼອດອາຍຸການສັນຍາເຊົ່າ. ໜີ້ຕ້ອງສິ່ງຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຈ່າຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປະຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າສຸດທິທີ່ໄດ້ຮັບ.

ມູນຄ່າສຸດທິທີ່ໄດ້ຮັບ ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕີດຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ, ວັດຖຸສິ້ນເປືອງ, ເຄື່ອງມື ແລະ ອຸປະກອນ	-	ຕົ້ນທຶນແມ່ນ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ.
ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	-	ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຊັບສິນໃນສາງ

ຊັບສິນທີ່ຊື້ເຂົ້າມາໃໝ່ ແລະ ກຳລັງກໍ່ສ້າງເພື່ອຂາຍໃນການດຳເນີນທຸລະກິດທົ່ວໄປ, ແທນທີ່ຈະຖືໄວ້ເພື່ອເຊົ່າ ຫຼື ເປັນການເພີ່ມມູນຄ່າທຶນ, ຖືເປັນຊັບສິນໃນສາງ ແລະ ຖືກວັດແທກດ້ວຍຕົ້ນທຶນທີ່ຕ່ຳກວ່າ ແລະ ມູນຄ່າສຸດທິທີ່ອາດຈະໄດ້ຮັບ (NRV).

ໂດຍສະເພາະ, ນີ້ແມ່ນຊັບສິນທີ່ຢູ່ອາໄສທີ່ບໍລິສັດພັດທະນາ ແລະ ຕັ້ງໃຈຈະຂາຍກ່ອນ, ຫຼື ເມື່ອສຳເລັດການພັດທະນາ.

ຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາຊັບສິນແຕ່ລະຢ່າງຖືກລະບຸສະຖານທີ່ ແລະ ເງື່ອນໄຂໃຫ້ເໝາະສົມ ປະກອບມີດັ່ງນີ້:

- ຈຳນວນເງິນທີ່ຈ່າຍໃຫ້ຜູ້ຮັບເໝົາເພື່ອການພັດທະນາ
- ລາຍຈ່າຍຂອງການກູ້ຢືມ, ຄ່າໃຊ້ຈ່າຍໃນການວາງແຜນ ແລະ ການອອກແບບ, ຄ່າໃຊ້ຈ່າຍໃນການກະກຽມສະຖານທີ່, ຄ່າທຳນຽມດ້ານວິຊາຊີບສຳລັບການບໍລິການທາງດ້ານກົດໝາຍ, ຄ່າໃຊ້ຈ່າຍໃນການພັດທະນາ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ກ່ຽວຂ້ອງ

ມູນຄ່າສຸດທິທີ່ຈະໄດ້ຮັບ (NRV) ແມ່ນການຄາດຄະເນລາຄາຂາຍໃນການດຳເນີນທຸລະກິດທົ່ວໄປ, ໂດຍອີງໃສ່ລາຄາຕະຫຼາດໃນວັນທີທີ່ລາຍງານ, ຫັກດ້ວຍຕົ້ນທຶນທີ່ຄາດຄະເນໃນການດຳເນີນງານໃຫ້ສຳເລັດ ແລະ ຄ່າໃຊ້ຈ່າຍທີ່ຄາດຄະເນທີ່ຈຳເປັນທີ່ໃຊ້ເພື່ອການຂາຍ.

ເມື່ອຊັບສິນໃນສາງຖືກຂາຍ, ມູນຄ່າຕາມບັນຊີຂອງຊັບສິນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາທີ່ລາຍຮັບທີ່ກ່ຽວຂ້ອງຖືກຮັບຮູ້. ມູນຄ່າຕາມບັນຊີຂອງຊັບສິນໃນສາງທີ່ຮັບຮູ້ໃນກຳໄລ ຫຼື ຂາດທຶນ ແມ່ນຖືກກຳນົດໂດຍອ້າງອີງໃສ່ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງຂອງຊັບສິນທີ່ຂາຍ ແລະ ການຈັດສັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອື່ນໆໂດຍອີງໃສ່ຂະໜາດທີ່ກ່ຽວຂ້ອງຂອງຊັບສິນທີ່ຂາຍ.

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການໝຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫຼັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນ.

ການເພີ່ມຂຶ້ນ ແລະ ໝຸດລົງຂອງຍອດເຫຼືອເງິນແຮແມ່ນບັນທຶກເຂົ້າລາຍຈ່າຍໃນການດຳເນີນງານສຳລັບເງິນແຮທີ່ຫັກເພີ່ມເຕີມ ແລະ ຈະຖືກບັນທຶກເຂົ້າໃນລາຍຮັບໃນການດຳເນີນງານໃນກໍລະນີເກັບຄືນເງິນແຮຈາກເຄື່ອງໃນສາງ ທີ່ສະແດງໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ການລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອແມ່ນຫົວໜ່ວຍທຸລະກິດທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງບໍລິສັດມີອຳນາດຄວບຄຸມກິດຈະການ. ບໍລິສັດຈະຄວບຄຸມເມື່ອມີການຖືກເປີດເຜີຍ ຫຼື ມີສິດທີ່ຈະປ່ຽນແປງຜົນຕອບແທນ. ບໍລິສັດໃນເຄືອແມ່ນຖືກສັງລວມເຂົ້າກັນຢ່າງຄົບຖ້ວນຕັ້ງແຕ່ມື້ທີ່ຖືກໂອນໃຫ້ບໍລິສັດໃນເອກະສານລາຍງານການເງິນສັງລວມ. ບັນດາບໍລິສັດໃນເຄືອແມ່ນຈະຖືກແຍກອອກຈາກກັນ ນັບຈາກມື້ທີ່ການຄວບຄຸມຢຸດເຊົາ.

ທຸລະກຳລະຫວ່າງບໍລິສັດ, ຍອດຄົງເຫຼືອ ແລະ ກຳໄລ ຫຼື ຂາດທຶນທີ່ບໍ່ໄດ້ຮັບຮູ້ໃນທຸລະກຳລະຫວ່າງບໍລິສັດ ແລະ ບໍລິສັດໃນເຄືອແມ່ນຈະຖືກລົບລ້າງ. ບັນຊີລາຍຊື່ຂອງບໍລິສັດໃນເຄືອແມ່ນສະແດງຢູ່ໃນ (ປົດອະທິບາຍເລກທີ 7).

ໃນເອກະສານລາຍງານການເງິນແບບແຍກກິດຈະການ, ເງິນລົງທຶນໃນບໍລິສັດໃນເຄືອແມ່ນນຳໃຊ້ວິທີຄິດໄລ່ແບບມູນຄ່າຕົ້ນທຶນ

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ທວງຍາກ.

ບໍລິສັດມີນະໂຍບາຍເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ການກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະເກີນກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ສ່ວນປ່ຽນແປງຂອງເງິນແຮໜີ້ທວງຍາກໄດ້ຖືກຮັບຮູ້ເປັນ “ລາຍຈ່າຍຈາກການດຳເນີນງານອື່ນໆ” ສຳລັບລາຍຈ່າຍເງິນແຮ ແລະ “ລາຍຮັບຈາກການດຳເນີນງານອື່ນໆ” ສຳລັບເກັບຄືນລ່າຍຈ່າຍເງິນແຮຢູ່ໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ.

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນແບບແຍກກິດຈະການເມື່ອໄດ້ຮັບເງິນຈາກຂາຮຸ້ນ ໃນກໍລະນີທີ່ປະກອບທຶນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ປະກອບທຶນເປັນວັດຖຸ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນໄດ້ປະກອບໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນແບບແຍກກິດຈະການ.

ຄັງສຳຮອງສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ນະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

ຄັງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 33/ສພຊ ລົງວັນທີ 29 ທັນວາ 2022, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງສຳຮອງຕາມລະບຽບການເປັນຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງແມ່ນສິບເປີເຊັນ (10%) ຂອງກຳໄລສຸດທິຈະຖືກຫັກເຂົ້າໃນຄັງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງສຳຮອງດັ່ງກ່າວຫາກມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄັງສຳຮອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກເຈົ້າຂອງບໍລິສັດ.

ຄັງສຳຮອງອື່ນໆປະກອບມີ ຄັງສຳຮອງສະຫວັດດີການ ແລະ ຄັງສຳຮອງເພື່ອຂະຫຍາຍອາຄານ ເຊິ່ງຫັກຈາກກຳໄລສະສົມຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ຈຳນວນເງິນທີ່ເໝາະສົມຈະຖືກກຳນົດໂດຍສະພາບໍລິຫານຂອງບໍລິສັດໃນແຕ່ລະປີ.

ຄັງສຳຮອງຂອງປີການບັນຊີປະຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນແບບແຍກກິດຈະການ ຖືກລາຍງານເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບ ແມ່ນຈະຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕ່າງປະເທດແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນແບບແຍກກິດຈະການ. ກຳໄລ ແລະ ຂາດທຶນທັງ ໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ.

ການຮັບຮູ້ລາຍຮັບ

ລາຍຮັບຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບຮູ້ ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຖືກຮັບຮູ້ເມື່ອຄວາມສ່ຽງອັນເປັນສາລະສຳຄັນ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເປັນດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນແບບແຍກກິດຈະການ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ອາກອນຕ້ອງສົ່ງອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນໜີ້ສິນອາກອນທີ່ຕ້ອງຈ່າຍ ໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ອາກອນລາຍໄດ້ສ່ວນບຸກຄົນ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ຄູ່ສັນຍາຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ໃນກໍລະນີທີ່ບໍ່ມີລາຄາຕະຫຼາດໃນລາຄາທີ່ຕົກລົງຕາມສັນຍາ.

ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍທີ່ກ່ຽວຂ້ອງກັບໂຮງງານທີ່ຢຸດຊົ່ວຄາວຈະຮັບຮູ້ເປັນຄ່າໃຊ້ຈ່າຍໃນການດຳເນີນງານອື່ນ.

ຂໍ້ມູນຕາມສ່ວນງານ

ສ່ວນງານເປັນອົງປະກອບທີ່ກຳນົດແຍກອອກຕ່າງຫາກໂດຍບໍລິສັດເຊິ່ງປະກອບທຸລະກິດການສະໜອງສິນຄ້າ ຫຼື ການບໍລິການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການສະໜອງສິນຄ້າ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດສະເພາະ (ສ່ວນງານທາງພູມສາດ), ທີ່ມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງໄປຈາກນັ້ນຂອງສ່ວນອື່ນໆ.

ກິດຈະກຳຫຼັກຂອງບໍລິສັດຕາມໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ການບໍລິການທາງດ້ານການທ່ອງທ່ຽວ (ຂາເຂົ້າ - ຂາອອກ) ແລະ ການກໍ່ສ້າງຄອນໂດມິນຽມສຳລັບການຂາຍ. ນອກຈາກນັ້ນ, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການຂອງບໍລິສັດທີ່ບໍລິສັດສະໜອງ ຫຼື ສະຖານທີ່ທີ່ບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການຄຸ້ມຄອງຂອງບໍລິສັດແມ່ນຖືວ່າມີພຽງແຕ່ສ່ວນດຽວສຳລັບສ່ວນທຸລະກິດ ແລະ ສ່ວນພູມສາດ ແລະ ດັ່ງນັ້ນຈຶ່ງບໍ່ຈຳເປັນຕ້ອງນຳສະເໜີຂໍ້ມູນຕາມສ່ວນງານ.

4. ຊັບສິນ, ອາຄານ ແລະ ອຸປະກອນ

	ອາຄານ ແລະ ສິ່ງປຸກສ້າງ ກີບ	*ພາຫະນະຂົນສົ່ງ ກີບ*	*ການປັບປຸງສິດທິໃນການເຊົ່າ ກີບ*	*ເຄື່ອງໃຊ້ຫ້ອງການ ກີບ*	*ລວມ ກີບ*
ຕົ້ນທຶນ					
ນະວັນທີ 1 ມັງກອນ 2025	134,382,315,687	11,020,750,831	29,165,303	762,174,746	146,194,406,567
ຊື້ເຂົ້າເພີ່ມ	-	-	-	100,478,381	100,478,381
ນະວັນທີ 30 ມິຖຸນາ 2025	134,382,315,687	11,020,750,831	29,165,303	862,653,127	146,294,884,948
ຄ່າຫຼຸ້ຍຫ້ຽນສະສົມ					
ນະວັນທີ 1 ມັງກອນ 2025	134,382,315,687	10,340,420,089	17,258,720	691,415,175	145,431,409,671
ຫັກຄ່າຫຼຸ້ຍຫ້ຽນພາຍໃນໄລຍະ	-	193,363,974	1,298,900	4,553,398	199,216,272
ນະວັນທີ 30 ມິຖຸນາ 2025	134,382,315,687	10,533,784,063	18,557,620	695,968,573	145,630,625,943
ມູນຄ່າສຸດທິຕາມບັນຊີ					
ນະວັນທີ 1 ມັງກອນ 2025	-	680,330,742	11,906,583	70,759,571	762,996,896
ນະວັນທີ 30 ມິຖຸນາ 2025	-	486,966,768	10,607,683	166,684,554	664,259,005

ປົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີແບບແຍກກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025

5. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ຊອບແວ ກີບ	*ສິດນຳໃຊ້ທີ່ດິນ ທີ່ບໍ່ມີກຳນົດ ກີບ*	*ລວມ ກີບ*
ຕົ້ນທຶນ			
ນະວັນທີ 1 ມັງກອນ 2025	38,139,600	3,655,353,775	3,693,493,375
ນະວັນທີ 30 ມິຖຸນາ 2025	38,139,600	3,655,353,775	3,693,493,375
ຄ່າຫຼ້ຍຫ້ຽນສະສົມ			
ນະວັນທີ 1 ມັງກອນ 2025	12,077,540	-	12,077,540
ຫັກຄ່າຫຼ້ຍຫ້ຽນພາຍໃນໄລຍະ	3,813,960	-	3,813,960
ນະວັນທີ 30 ມິຖຸນາ 2025	15,891,500	-	15,891,500
ມູນຄ່າສຸດທິຕາມບັນຊີ			
ນະວັນທີ 1 ມັງກອນ 2025	26,062,060	3,655,353,775	3,681,415,835
ນະວັນທີ 30 ມິຖຸນາ 2025	22,248,100	3,655,353,775	3,677,601,875

6. ຊັບສິນພວມກໍ່ສ້າງ

	30 ມິຖຸນາ 2025 ກີບ	*31 ທັນວາ 2024 ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	5,966,361,212	5,966,361,212
ໂຄງການຕຶກ 21 (*)	8,230,143,199	28,447,998,304
ໂຄງການກໍ່ສ້າງເຮືອນພັກ	3,503,325,726	2,094,090,295
ໂຄງການກໍ່ສ້າງໜອງບອນ	52,484,784	52,484,784
ໂຄງການກໍ່ສ້າງລີສອດ-ໂຮງແຮມ	42,118,600	42,118,600
ໂຄງການກໍ່ສ້າງຫ້ອງການບໍ່ແຮ່	36,918,050	36,918,048
ໂຄງການວ້ຽງ	107,367,500	-
	17,938,719,071	**36,639,971,243**
ເງິນແຮສຳລັບຊັບສິນພວມກໍ່ສ້າງ	(5,966,361,212)	(5,966,361,212)
	11,972,357,859	**30,673,610,031**

(*) ການນຳສະເໜີນີ້ແມ່ນສຳລັບຄ່າໃຊ້ຈ່າຍໃນການກໍ່ສ້າງທີ່ກ່ຽວຂ້ອງກັບການພັດທະນາອາຄານຄອນໂດມິນຽມ (“ຕຶກ 21”) ທີ່ຕັ້ງຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ມາຮອດວັນທີ 30 ມິຖຸນາ 2025, ຄະນະບໍລິຫານງານຂອງກຸ່ມໄດ້ກຳນົດຈຸດປະສົງການນຳໃຊ້ອາຄານ 21: ຊັ້ນທີ 1 ຫາ ຊັ້ນ 3 ຈະຖືກກຳນົດໃຫ້ເປັນຫ້ອງການ, ສ່ວນຊັ້ນເທິງຊັ້ນ 4 ຈະຖືກຈັດສັນເພື່ອຂາຍ. (ມາຮອດວັນທີ 31 ທັນວາ 2024: ຊັ້ນທີ 1 ຫາ ຊັ້ນ 10 ຈະຖືກການິດໃຫ້ໃຊ້ຫ້ອງການ, ໃນຂະນະທີ່ຊັ້ນເທິງຊັ້ນ 11 ຈະຖືກຈັດສັນເພື່ອຂາຍ). ການຕັດສິນໃຈນີ້ໄດ້ຮັບການອະນຸມັດຢ່າງເປັນທາງການໂດຍຄະນະກຳມະການບໍລິຫານ

7. ການລົງທຶນໃນບໍລິສັດໃນເຄືອ

		ຈຳນວນເງິນລົງທຶນ	
		30 ມິຖຸນາ 2025	*31 ທັນວາ 2024*
		ກີບ	*ກີບ*
ບໍລິສັດໃນເຄືອ			
ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ	(i)	558,564,000	558,564,000
ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດຜູ້ດຽວ	(ii)	5,060,888,057	4,644,993,146
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ	(iii)	229,612,000	-
ບໍລິສັດ ສະຖາບັນແຜນການ ແລະ ການອອກແບບ ທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	(iv)	-	-
ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ	(v)	-	-
ບໍລິສັດ ພັດທະນາ ຊັບພະຍາກອນບໍ່ແຮ່ລາວ ຈຳກັດຜູ້ດຽວ	(vi)	-	-
ບໍລິສັດ ສະຖາບັນສຳຫຼວດ ແລະ ອອກແບບແຫ່ງຊາດ ລາວ ຈຳກັດຜູ້ດຽວ	(vii)	-	-
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດ ຜູ້ດຽວ	(viii)	-	-
		5,849,064,057	**5,203,557,146**

(i) ໃນວັນທີ 14 ມີນາ 2023, ບໍລິສັດໄດ້ສ້າງຕັ້ງບໍລິສັດ ບໍລິສັດ ສະໝຸນໄພຈິ່ງເຄີ (ລາວ) ຈຳກັດຜູ້ດຽວ ("ສະໝຸນໄພຈິ່ງເຄີ (ລາວ)"), ບໍລິສັດທີ່ໄດ້ສ້າງຕັ້ງຢູ່ໃນ ສປປ ລາວ ດ້ວຍທຶນຈົດທະບຽນ 1,000 ລ້ານກີບ. ກິດຈະກຳຕົ້ນຕໍຂອງບໍລິສັດ ບໍລິສັດ ສະໝຸນໄພຈິ່ງເຄີ (ລາວ) ຈຳກັດຜູ້ດຽວ ແມ່ນການກະສິກຳສະໝຸນໄພ. ໃນວັນທີ 17 ມິຖຸນາ 2024 ໄດ້ປ່ຽນຊື່ເປັນ ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ, ໃບທະບຽນວິສາຫະກິດ ສະບັບເລກທີ 2118/ຈທວ ລົງວັນທີ 17 ມິຖຸນາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຕົ້ນຕໍແມ່ນ ການຈຳໜ່າຍພືດສະໝຸນໄພເພື່ອສົ່ງອອກ, ປູກເພື່ອຂາຍພາຍໃນ ແລະ ສົ່ງອອກ.

(ii) ໃນວັນທີ 14 ມິຖຸນາ 2023, ບໍລິສັດ ໄດ້ສ້າງຕັ້ງ ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດຜູ້ດຽວ ("ກໍ່ສ້າງ ພັດທະນາ ຕົວເມືອງລາວ") ເປັນບໍລິສັດສ້າງຕັ້ງຢູ່ໃນ ສປປ ລາວ ດ້ວຍທຶນຈົດທະບຽນ 5,000 ລ້ານກີບ. ກິດຈະກຳຫຼັກຂອງບໍລິສັດແມ່ນ ກິດຈະກຳກໍ່ສ້າງ. ໃນວັນທີ 05 ກໍລະກົດ 2024 ໄດ້ປ່ຽນຊື່ເປັນ ກໍ່ສ້າງ ພັດທະນາ ຕົວເມືອງລາວ, ບໍລິສັດນີ້ຈະສ້າງຕັ້ງໂຮງງານເຟີນິເຈີເພື່ອຈຳໜ່າຍໃນພາຍໃນ ແລະ ສົ່ງອອກ, ສຳຫຼວດ, ອອກແບບ ແລະ ກໍ່ສ້າງອາຄານ, ກິດຈະກຳທາງດ້ານອະສັງຫາລິມະຊັບ, ໃຫ້ບໍລິການທາງດ້ານການບໍລິຫານຈັດການແກ່ໜ່ວຍງານອື່ນໆ, ການບໍລິການທີ່ປຶກສາດ້ານການກໍ່ສ້າງ.

(iii) ໃນວັນທີ 12 ຕຸລາ 2024, ບໍລິສັດໄດ້ສ້າງຕັ້ງສະຖາບັນແຜນການ ແລະ ການອອກແບບການທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ, ເຊິ່ງເປັນບໍລິສັດລອມຢູ່ໃນ ສປປ ລາວ ເຊິ່ງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນມີ ຫຸ້ນສ່ວນ 100% ແລະ ທຶນຈົດທະບຽນແມ່ນ 2,000,000 ກີບ ຕາມໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 31102/ນຍ ລົງວັນທີ 28 ຕຸລາ 2020 ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 31102/ກປ. ການຄ້າ. ກິດຈະກຳຕົ້ນຕໍຂອງບໍລິສັດນີ້ແມ່ນການວາງແຜນແລະການອອກແບບການທ່ອງທ່ຽວ.

7. ການລົງທຶນໃນບໍລິສັດໃນເຄືອ (ຕໍ່)

(iv) ໃນວັນທີ 10 ສິງຫາ 2023, ບໍລິສັດໄດ້ສ້າງຕັ້ງບໍລິສັດ ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ, ເຊິ່ງເປັນບໍລິສັດລອມຢູ່ໃນ ສປປ ລາວ ເຊິ່ງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນມີ 100% ຫຸ້ນສ່ວນໃນບໍລິສັດນີ້ ແລະ ທຶນຈົດທະບຽນແມ່ນ 20,000,000,000 ກີບ ຕາມໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 2402/ກປ. ການຄ້າ. ກິດຈະກຳຕົ້ນຕໍຂອງບໍລິສັດແມ່ນນຳເຂົ້າວັດສະດຸກໍ່ສ້າງແລະອຸປະກອນທຸກປະເພດ, ເຄື່ອງຈັກກໍ່ສ້າງເພື່ອຈຳໜ່າຍພາຍໃນປະເທດ. ປະສານສົມທົບກັບກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຂໍໃບອະນຸຍາດດຳເນີນທຸລະກິດ.

(v) ໃນວັນທີ 1 ກຸມພາ 2024, ບໍລິສັດໄດ້ສ້າງຕັ້ງບໍລິສັດ ບໍລິການວ່າງສະແດງສາກົນລາວ ຈຳກັດຜູ້ດຽວ ເປັນບໍລິສັດທີ່ຕັ້ງຢູ່ໃນ ສປປ ລາວ ເຊິ່ງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນມີ ກຳມະສິດເປັນເຈົ້າຂອງ 100% ດ້ວຍທຶນຈົດທະບຽນ 500 ລ້ານກີບ. ໃບທະບຽນວິສາຫະກິດເລກທີ 0414/ຈທວ ລົງວັນທີ 01 ກຸມພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດ ແມ່ນການຜະລິດສື່ບັນເທີງ, ຮູບເງົາ ແລະ ການໂຄສະນາ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(vi) ໃນວັນທີ 29 ກຸມພາ 2024, ບໍລິສັດໄດ້ສ້າງຕັ້ງບໍລິສັດ ພັດທະນາຊັບພະຍາກອນແຮ່ລາວ ຈຳກັດ, ເປັນບໍລິສັດທີ່ປະກອບຢູ່ໃນ ສປປ ລາວ, ເຊິ່ງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ມີກຳມະສິດເປັນເຈົ້າຂອງ 100% ດ້ວຍທຶນຈົດທະບຽນ 500 ລ້ານກີບ. ໃບທະບຽນວິສາຫະກິດ ສະບັບເລກທີ 0767/ຈທວ ລົງວັນທີ 29 ກຸມພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງ ບໍລິສັດ ພັດທະນາຊັບພະຍາກອນແຮ່ລາວຈຳກັດ ແມ່ນຂຸດຄົ້ນ ແລະ ສຳຫຼວດພື້ນທີ່ຂຸດຄົ້ນບໍ່ແຮ່, ປະກອບສ່ວນກັບ ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອດຳເນີນເອກະສານທາງດ້ານກົດໝາຍ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(vii) ໃນວັນທີ 6 ພຶດສະພາ 2024, ບໍລິສັດໄດ້ສ້າງຕັ້ງບໍລິສັດ ສະຖາບັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ ເຊິ່ງເປັນບໍລິສັດສ້າງຕັ້ງຢູ່ໃນ ສປປ ລາວ ເຊິ່ງ LCTC ມີກຳມະສິດເປັນເຈົ້າຂອງ 100% ດ້ວຍທຶນຈົດທະບຽນ 10,000 ລ້ານກີບ. ໃບທະບຽນວິສາຫະກິດ ສະບັບເລກທີ 1495/ຈທວ ລົງວັນທີ 06 ພຶດສະພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດແມ່ນການສຳຫຼວດ ແລະ ການອອກແບບອາຄານ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(viii) ໃນວັນທີ 6 ພຶດສະພາ 2024, ບໍລິສັດໄດ້ສ້າງຕັ້ງ ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ, ເຊິ່ງເປັນບໍລິສັດສ້າງຕັ້ງຢູ່ໃນ ສປປ ລາວ ເຊິ່ງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນຖືຫຸ້ນ 100% ດ້ວຍທຶນຈົດທະບຽນ 1,000 ລ້ານກີບ. ໃບທະບຽນວິສາຫະກິດ ສະບັບເລກທີ 1485/ຈທວ ລົງວັນທີ 06 ພຶດສະພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຕົ້ນຕໍແມ່ນການໃຫ້ບໍລິການທີ່ປຶກສາທາງດ້ານການສຶກສາ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

8. ຊັບສິນໝຸນວຽນອື່ນໆ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພະນັກງານ	2,444,005,367	1,326,489,099
ເງິນຄ້ຳປະກັນລ່ວງໜ້າ (*)	2,154,250,000	2,167,000,000
ອື່ນໆ	1,470,120,108	829,287,449
	6,068,375,475	**4,322,776,548**

(*) ການຊຳລະລ່ວງໜ້ານີ້ແມ່ນເປັນເງິນຄ້ຳປະກັນທີ່ມອບໃຫ້ ບໍລິສັດ ລັດພັດທະນາຊົນນະບົດ ເພື່ອຈຸດປະສົງໃນໂຄງການສຳ ຫຼວດ ແລະ ຂຸດຄົ້ນບໍ່ແຮ່ ຢູ່ແຂວງຫົວພັນ ອີງຕາມບົດບັນທຶກຄວາມເຂົ້າໃຈ ສະບັບເລກທີ 224 ລົງວັນທີ 26 ມິນາ 2024.

9. ເຄື່ອງໃນສາງ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງ	1,138,408,226	1,148,766,633
ອຸປະກອນ ແລະ ເຄື່ອງມື	5,511,428,578	5,201,697,528
ສິນຄ້ຳພວມຜະລິດ	9,139,216,605	9,139,216,605
ສິນຄ້ຳສຳເລັດຮູບ	773,052,367	773,052,367
ຊັບສິນພວມກ່ໍສ້ຳງ (*)	28,502,280,663	7,105,923,367
ໂຄງການເຄື່ອງຈັກ, ອາໄຫ່ ແລະ ຕະຫຼາດກະສິກຳ	1,460,250,000	-
	46,524,636,438	**23,368,656,500**
ເງິນແຮສຳລັບເຄື່ອງໃນສາງ	(15,258,944,657)	(11,044,644,047)
	31,265,691,782	**12,324,012,453**

(*) ຊັບສິນພວມກ່ໍສ້ຳງແມ່ນເປັນຕົວແທນໃຫ້ແກ່ຄ່ຳໃຊ້ຈ່ຳຍໃນການກ່ໍສ້ຳງທີ່ກ່ຽວຂ້ອງກັບການພັດທະນາອາຄານຄອນໂດມິ ນຽມ ("ຕຶກ 21") ທີ່ຕັ້ງຢູ່ບ້ານໂພນພະເນົາ, ເມືອງໄຊເສດຖຳ, ນະຄອນຫຼວງວຽງຈັນ, ສປປ ລາວ. ມາຮອດວັນທີ 30 ມິຖຸນາ 2025, ຄະນະບໍລິຫານງານຂອງກຸ່ມໄດ້ກຳນົດຈຸດປະສົງການນຳໃຊ້ອາຄານ 21: ຊັ້ນທີ 1 ຫາ ຊັ້ນ 3 ຈະຖືກກຳນົດໃຫ້ເປັນ ຫ້ອງການ, ສ່ວນຊັ້ນເທິງຊັ້ນ 4 ຈະຖືກຈັດສັນເພື່ອຂຳຍ. (ມາຮອດວັນທີ 31 ທັນວາ 2024: ຊັ້ນທີ 1 ຫາ ຊັ້ນ 10 ຈະຖືກ ກຳນົດໃຫ້ໃຊ້ຫ້ອງການ, ໃນຂະນະທີ່ຊັ້ນເທິງຊັ້ນ 11 ຈະຖືກຈັດສັນເພື່ອຂຳຍ). ການຕັດສິນໃຈນີ້ໄດ້ຮັບການອະນຸມັດຢ່ຳງ ເປັນທຳງການໂດຍຄະນະກຳມະການບໍລິຫານ

10. ໜີ້ຕ້ອງຮັບທາງການຄ້າ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງຮັບການຄ້າ	1,914,964,873	2,050,315,747
ເງິນແຮສຳລັບໜີ້ຕ້ອງຮັບທອງຍາກ	(366,917,757)	(394,203,957)
	1,548,047,116	**1,656,111,790**

10. ໜີ້ຕ້ອງຮັບທາງການຄ້າ (ຕໍ່)

ລາຍລະອຽດຂອງ ເງິນແຮສຳລັບໜີ້ຕ້ອງຮັບທອງຍາກ ນະວັນທີ 30 ມິຖຸນາ 2025 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	(366,917,757)	(394,203,957)
ລວມ	**(366,917,757)**	**(394,203,957)**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທອງຍາກ ນະວັນທີ 31 ທັນວາ 2024 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	(394,203,957)	(394,203,957)
ລວມ	**(394,203,957)**	**(394,203,957)**

11. ເງິນສົດ

	30 ມິຖຸນາ 2025	*31 ທັນວາ 2024*
	ກີບ	*ກີບ*
ເງິນສົດໃນຄັງ	125,468,068	20,203,147
ເງິນຝາກທະນາຄານ	4,180,067,033	554,794,511
	4,305,535,101	**574,997,658**

ປົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີແບບແຍກກິດຈະການ (ຕໍ່)
ນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025

12. ໜີ້ຕ້ອງສິ່ງທາງການຄ້າ

	30 ມິຖຸນາ 2025 *ກີບ*	*31 ທັນວາ 2024* *ກີບ*
ໜີ້ຕ້ອງສິ່ງທາງການຄ້າ ຈາກຜູ້ສະໜອງ	**6,926,294,846**	**6,411,332,856**
ບໍລິສັດ ອ້າ ຄອນກີດ	*5,909,734,486*	*5,653,183,546*
ອື່ນໆ	*1,016,560,360*	*758,149,310*
ຄ່າທຳນຽມກວດສອບ	414,693,125	1,614,415,000
	7,340,987,971	**8,025,747,856**

13. ເງິນລ່ວງໜ້າຈາກລູກຄ້າ

	30 ມິຖຸນາ 2025 *ກີບ*	*31 ທັນວາ 2024* *ກີບ*
ເງິນລ່ວງໜ້າຈາກຜູ້ຊື້ຕາມສັນຍາສະສາງຊັບສິນ	6,176,158,400	8,015,587,600
ເງິນລ່ວງໜ້າສຳລັບຈອງຄອນໂດມິນຽມຈາກລູກຄ້າ	3,227,443,914	4,405,220,089
ເງິນລ່ວງໜ້າສຳລັບໂຄງການຕະຫລາດຂາຍເຄື່ອງກິນຈັກ-ອາໄຫຼ່ແລະກຳສີກຳ	16,156,875,000	-
ເງິນລ່ວງໜ້າອື່ນໆຈາກລູກຄ້າ	20,000,000	20,000,000
	25,580,477,314	**12,440,807,689**

14. ພັນທະອາກອນ

	30 ມິຖຸນາ 2025 *ກີບ*	*31 ທັນວາ 2024* *ກີບ*
ອາກອນຕ້ອງສິ່ງຈາກຜູ້ສະໜອງຕ່າງປະເທດ	3,058,050,485	3,058,050,486
ອາກອນມູນຄ່າເພີ່ມສິ້ນອອກ	2,919,472,079	2,919,472,079
ໜີ້ຕ້ອງສິ່ງອາກອນກຳໄລ (ປົດອະທິບາຍເລກທີ 21)	479,656,526	479,656,526
ອາກອນອື່ນໆ	2,170,703,794	1,695,492,559
	8,627,882,884	**8,152,671,650**

15. ໜີ້ຕ້ອງສົ່ງອື່ນໆ

	30 ມິຖຸນາ 2025 *ກີບ*	*30 ມິຖຸນາ 2024* *ກີບ*
ໜີ້ຕ້ອງສົ່ງເງິນປັນຜົນໃຫ້ພາກສ່ວນກ່ຽວຂ້ອງ (ປົດອະທິບາຍເລກທີ 22) (*)	13,581,363,960	3,058,050,458
ເງິນກູ້ຢືມຈາກພາກສ່ວນກ່ຽວຂ້ອງ	18,565,423,947	1,285,625,029
ໜີ້ຕ້ອງສົ່ງປະກັນສັງຄົມ	35,934,781	479,656,526
ອື່ນໆ	370,625,734	1,334,301,317
	32,553,348,422	**6,157,633,357**

15. ໜີ້ຕ້ອງສົ່ງອື່ນໆ (ຕໍ່)

(*) ລາຍລະອຽດຂອງການຈ່າຍເງິນປັນຜົນມີດັ່ງນີ້:

	30 ມິຖຸນາ 2025 *ກີບ*	*30 ມິຖຸນາ 2024* *ກີບ*
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງສົ່ງເງິນປັນຜົນປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

16. ທຶນຈົດທະບຽນທີ່ໄດ້ຖອກແລ້ວ

16.1 ຮຸ້ນ

	30 ມິຖຸນາ 2025		*31 ທັນວາ 2024*	
	ຈຳນວນ (ຮຸ້ນ)	*ມູນຄ່າ (ກີບ)*	*ຈຳນວນ (ຮຸ້ນ)*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ອອກ ແລະ ຖອກແລ້ວ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ສຄຄຊ ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ເນື່ອງຈາກບໍລິສັດໄດ້ສຳເລັດຂັ້ນຕອນ IPO ໂດຍຮຸ້ນທັງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ຊື່ຮຸ້ນ "LCC") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ.

16. ທຶນຈົດທະບຽນທີ່ໄດ້ຖອກແລ້ວ (ຕໍ່)

16.1 ຮຸ້ນ (ຕໍ່)

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 30 ມິຖຸນາ 2025 ແລະ ນະວັນທີ 31 ທັນວາ 2024 ມີດັ່ງນີ້:

	30 ມິຖຸນາ 2025		*31 ທັນວາ 2024*	
ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັ້ນ*	*ຈຳນວນຮຸ້ນ*	*ເປີເຊັ້ນ*
Yunnan Hengshi Chengrui Holdings Co., Ltd (“Yunnan Qianhan”)	14,280,000	35.696%	14,280,000	35.70%
ລັດວິສາຫະກິດພັດທະນາກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາ ອອກ-ຂາເຂົ້າ (DAI)	13,720,000	34.297%	13,720,000	34.30%
ບໍລິສັດຫຼັກຊັບລາວ - ຈີນ (LCS)	7,547,800	18.868%	7,547,800	18.87%
ບໍລິສັດ ມະຫາຊົນ ແລະ ນັກ ລົງທຶນອື່ນໆ	4,456,200	11.139%	4,456,200	11.14%
	40,004,000		**40,004,000**	

17. ລາຍໄດ້ຈາກການດຳເນີນງານອື່ນໆ

	ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ລາຍໄດ້ຈາກການຂາຍວັດຖຸດິບ, ເສດເຫຼັກ ແລະ ຊັບສິນ	-	523,364,486
ເກັບຄືນເງິນແຮໝັ້ນທ່ວງຍາກ	27,286,200	8,066,000
ເກັບຄືນເງິນແຮສຳລັບເຄື່ອງໃນສາງ	-	5,474,210
ອື່ນໆ	5,964,000	761,229,238
	33,250,200	**1,298,133,934**

18. ລາຍຈ່າຍໃນການດຳເນີນງານອື່ນໆ

ລາຍຈ່າຍສ່ວນໃຫຍ່ແມ່ນຕິດພັນກັບການຢຸດຜະລິດຂອງໂຮງງານມີລາຍລະອຽດດັ່ງລຸ່ມນີ້:

	ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ຫັກເງິນແຮສິນຄ້າໃນສາງ	4,214,300,610	-
ຄ່າໃຊ້ຈ່າຍໃນການກຳຈັດວັດຖຸດິບ	-	23,518,489
ລາຍຈ່າຍໃຫ້ພະນັກງານ	657,780,598	881,092,446
ຄ່າກວດສອບສິ່ງແວດລ້ອມ	709,318,500	-
ຄ່າໃຊ້ຈ່າຍຫັກລ້າງວັດຖຸດິບອອກ	5,852,298	4,876,916
ສາທາລະນຸປະໂພກ ແລະ ນ້ຳມັນ	90,000	59,834,436
ອື່ນໆ	208,641,773	108,744,593
	5,795,983,779	**1,078,066,880**

19. ລາຍຈ່າຍໃນການບໍລິຫານ

	ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ລາຍຈ່າຍໃຫ້ພະນັກງານ	4,460,808,272	3,681,911,946
ລາຍຈ່າຍຄ່າຫຼ້ຽຫ້ຽນ	197,177,934	181,010,135
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	200,447,076	209,203,563
ລາຍຈ່າຍຄ່າເຊົ່າ	186,896,024	163,718,424
ລາຍຈ່າຍຄ່າບຳລຸງຮັກສາ	360,051,953	232,365,152
ລາຍຈ່າຍຄ່າເດີນທາງ	301,040,903	120,930,715
ລາຍຈ່າຍຕ້ອນຮັບແຂກ ແລະ ການບັນເທີງ	362,154,520	396,252,016
ລາຍຈ່າຍຄ່າກວດສອບບັນຊີ	414,693,125	339,870,300
ລາຍຈ່າຍໃນການບໍລິຫານອື່ນໆ	429,514,316	1,018,270,338
ລາຈ່າຍທີ່ປຶກສາດ້ານກົດໝາຍ & ຄ່າວິຊາການ	-	375,993,000
ລາຍຈ່າຍສະສາງໜີ້ຕ້ອງຮັບ	-	497,227,177
	6,912,784,123	**7,216,752,766**

20. ຕົ້ນທຶນທາງການເງິນ

	ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ລາຍຈ່າຍດອກເບ້ຍ	549,650,963	-
ຂາດທຶນສຸດທິຈາກອັດຕາແລກປ່ຽນ	320,380,103	687,732,856
	870,031,066	**687,732,856**

21. ອາກອນກຳໄລ

ອີງຕາມກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 67/ສພຊ ນະວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ສຳລັບໄລຍະຈາກ ວັນທີ 1 ມັງກອນ 2020, ອາກອນກຳໄລ ໃນອັດຕາ 20%. ນອກຈາກນີ້, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຈະໄດ້ຮັບ ອັດຕາສ່ວນຫຼຸດ 13% ສຳລັບໄລຍະສີ່ປີນັບແຕ່ວັນທີ່ຈົດທະບຽນ. ດັ່ງນັ້ນ, ລາຍໄດ້ຂອງອາກອນກຳໄລຂອງບໍລິສັດໃນປີ 2025 ແມ່ນຈະຖືກນຳໃຊ້ໃນອັດຕາ 20%. (2024: 20%)

ການມອບອາກອນຂອງບໍລິສັດ ແມ່ນຈະຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍ ສາອາກອນ ແລະ ກົດລະບຽບຕ່າງໆມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນ ແບບແຍກກິດຈະການອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສິ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ. ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກຄິດໄລ່ໂດຍ ການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນແບບແຍກກິດຈະການ.

ການຄາດຄະເນ ອາກອນກຳໄລຖືກສະແດງຢູ່ຂ້າງລຸ່ມນີ້:

	ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2025 ກີບ	*ສຳລັບຫົກເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*
ຂາດທຶນກ່ອນຫັກອາກອນ	**(13,545,484,471)**	**(7,684,350,306)**
ດັດແກ້ຂາດທຶນກ່ອນຫັກອາກອນ:		
ເກັບຄືນເງິນແຮສຳລັບເຄື່ອງໃນສາງ	4,214,300,610	(5,474,210)
(ເກັບຄືນເງິນແຮໜີ້ທວງຍາກ)/ເງິນແຮໜີ້ທວງຍາກ	(27,286,200)	(8,066,000)
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	698,437,492	1,886,194,050
ຄາດຄະເນອາກອນຂາດທຶນຕ້ອງມອບໃນປີ	**(8,660,032,569)**	**(5,811,696,466)**
ຄາດຄະເນລ່ວງໜ້າອາກອນກຳໄລພາຍໃນປີໃນອັດຕາ 20% (2024: 20%)		**-**
ອາກອນກຳໄລຕ້ອງຈ່າຍຕົ້ນປີ	479,656,526	479,656,526
ອາກອນກຳໄລທີ່ໄດ້ຈ່າຍໃນປີ	-	-
ອາກອນກຳໄລຕ້ອງຈ່າຍທ້າຍປີ (ປົດອະທິບາຍເລກທີ 14)	**479,656,526**	**479,656,526**

21. ອາກອນກຳໄລ (ຕໍ່)

ຂາດທຶນທາງອາກອນຍົກໄປຫັກຕໍ່

ສຳລັບການຂາດທຶນທາງອາກອນເກີດຂຶ້ນໃນປີ 2020 ແລະ ໃນປີຕໍ່ໜ້າ, ອີງຕາມກົດໝາຍອາກອນສະບັບເລກທີ 67/ສພຊ ລົງ ວັນທີ 18 ມິຖຸນາ 2019, ມາດຕາທີ 23, ຂາດທຶນປະຈຳປີເຊິ່ງໄດ້ຮັບການຮັບຮອງໂດຍໜ່ວຍງານກວດສອບ ຫຼື ບໍລິສັດກວດສອບບັນຊີອິດສະຫຼະ ແລະ ໄດ້ຮັບການຍອມຮັບຈາກເຈົ້າໜ້າທີ່ສ່ວຍສາອາກອນ, ມີສິດຍົກໄປຫັກຕໍ່ກັບອາກອນກຳໄລໃນ ຊ່ວງໄລຍະເວລາ 5 ປີ ຫລັງຈາກເກີດການຂາດທຶນທາງອາກອນ.

ນະວັນທີໃບລາຍງານຖານະການເງິນແບບແຍກກິດຈະການ, ບໍລິສັດ ມີຂາດທຶນທາງອາກອນສະສົມທີ່ສາມາດຍົກໄປຫັກຕໍ່ກັບລາຍໄດ້ທາງອາກອນໃນອະນາຄົດ. ລາຍລະອຽດດັ່ງລຸ່ມນີ້:

ສະກຸນເງິນ: ກີບ

ປີທີເລີ່ມຕົ້ນ	*ສາມາດນຳໃຊ້ຮອດປີ*	*ມູນຄ່າຂາດທຶນທາງອາກອນ*	*ນຳໃຊ້ຮອດວັນທີ 30 ມິຖຸນາ 2025*	*ໝົດກຳນົດນຳໃຊ້*	*ບໍ່ທັນນຳໃຊ້ນະວັນທີ 30 ມິຖຸນາ 2025*
2020	2025	34,611,776,360	(2,723,966,299)	-	31,887,810,061
2021	2026	12,384,451,613	-	-	12,384,451,613
2022	2027	13,325,630,431	-	-	13,325,630,431
2023	2028	1,335,364,138	-	-	1,335,364,138
2025	2030	8,660,032,569	-	-	8,660,032,569
TOTAL		**70,317,255,111**	**(2,723,966,299)**	**-**	**67,593,288,812**

ການຂາດທຶນທາງອາກອນທີ່ຄາດຄະເນຕາມການເປີດເຜີຍອາກອນກຳໄລຂອງບໍລິສັດ ແມ່ນຍັງບໍ່ໄດ້ຮັບການກວດສອບຈາກ ເຈົ້າໜ້າທີ່ສ່ວຍສາອາກອນທ້ອງຖິ່ນ ນະວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການ.

ບໍ່ມີການຮັບຮູ້ອາກອນລໍຖ້າສະສາງທີ່ເຫຼືອ 69,285,254,835 ກີບ ເນື່ອງຈາກບໍ່ສາມາດລະບຸລາຍໄດ້ທີ່ຕ້ອງເສຍອາກອນ ໃນອະນາຄົດໄດ້ໃນຂະນະນີ້

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດຕາມລາຄາທີ່ໄດ້ຕົກລົງກັນຕາມສັນຍາໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2025 ກີບ*	*ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ*
ບໍລິສັດພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດ	ບໍລິສັດໃນເຄືອ	ການຊຳລະໃນນາມ	334,985	8,761,816
ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດ	ບໍລິສັດໃນເຄືອ	ການຊຳລະໃນນາມ	1,193,508,761	3,183,592
ບໍລິສັດ ວັດສະດຸກໍ່ສ້າງໃຫມ່ ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	7,061,000	430,000
ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	274,058,750	4,320,000
ບໍລິສັດ ບໍລິການວາງສະແດງ ສາກົນລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	7,131,000	2,110,000
ບໍລິສັດ ພັດທະນາ ຊັບພະຍາກອນບໍແຮ່ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	1,634,439,500	1,611,073,500
ບໍລິສັດ ສະຖາບັນສຳຫຼວດ ແລະ ອອກແບບແຫ່ງຊາດ ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	7,066,000	3,480,000
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	7,031,000	1,880,000
Yunnan Hengshi Chengrui Holdings Co., Ltd (“Yunnan Qianhan”)	ຜູ້ຖືຮຸ້ນ	ເງິນກູ້ຢືມ	301,917,650	133,573,571
	ຜູ້ຖືຮຸ້ນ ຮອງ	ຊຳລະເງິນກູ້ຢືມຄືນ ເງິນກູ້ຢືມ	168,338,162	561,389,949
Mr. Li Xue Bing	ຜູ້ອຳນວຍການ		-	3,835,590,000
		ຊຳລະເງິນກູ້ຢືມຄືນ	22,567,500	-
Mr. Wang Hui	ຜູ້ອຳນວຍການ	ເງິນກູ້ຢືມ	-	222,564,810
		ຊຳລະເງິນກູ້ຢືມຄືນ	222,564,810	-
Mr. Ding Yu Dong	ຜູ້ອຳນວຍການ	ເງິນກູ້ຢືມ	141,630,000	58,370,000

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດ ຕາມລາຄາທີ່ໄດ້ຕົກລົງກັນທາງສັນຍາ. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2025 ກີບ*	*ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ*
HK XIANGHUA LIMITED NO4	ພາກສ່ວນທີ່ກ່ຽວຂ້ອງ	ເງິນກູ້ຢືມ	7,501,625,000	6,501,000,000
	ພາກສ່ວນທີ່ກ່ຽວຂ້ອງ	ຊຳລະເງິນກູ້ຢືມຄືນ	549,776,448	-
ທ່ານ ເນ້ຍ ເຫຼ້ຍ	ຜູ້ອຳນວຍການໃຫຍ່	ກູ້ຢືມ	-	1,875,907,500
	ຜູ້ອຳນວຍການໃຫຍ່	ຊຳລະເງິນກູ້ຢືມຄືນ	448,062,500	-

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ 2025 ແລະ ວັນທີ 31 ທັນວາ 2024 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ຈາຍການເຄື່ອນໄຫວ*	*ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2025 ກີບ*	*ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ກີບ*
ມູນຄ່າຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	1,000,000,000	1,000,000,000
ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	26,774,755	26,439,770
ບໍລິສັດ ວັດສະດຸກໍ່ສ້າງໃຫມ່ ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	1,347,375,101	153,866,340
ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວ ແຫ່ງຊາດລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	21,896,500	14,835,500
ສູນຜະລິດຮູບເງົາ ແລະ ລາຍການໂທລະພາບແຫ່ງຊາດ ລາວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	52,446,750	8,000,000
ບໍລິສັດ ບໍລິການວາງສະແດງ ສາກົນລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	9,641,000	2,510,000

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2025 ກີບ*	*ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2024 ກີບ*
ບໍລິສັດ ພັດທະນາ ຊັບພະຍາກອນບໍແຮ່ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	1,634,439,500	1,635,656,000
ບໍລິສັດ ສະຖາບັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	11,166,000	4,100,000
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	9,581,000	2,550,000
			4,113,320,606	**2,847,957,610**

ຍອດເຫຼືອໜີ້ຕ້ອງສິ່ງຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 30 ມິຖຸນາ 2025 ແລະ ວັນທີ 31 ທັນວາ 2024 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	30 ມິຖຸນາ 2025 *ກີບ*	31 ທັນວາ 2024 *ກີບ*
ມູນຄ່າໜີ້ຕ້ອງສິ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ຜູ້ຖືຮຸ້ນ	ໂອນໜີ້ສຸດທິຈາກ CYC	3,051,966,784	3,353,884,434
		ກູ້ຢືມ (*)	64,526,948	232,865,110
ລັດວິສາຫະກິດ ພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການ ຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	4,374,818,540	4,374,818,540
ບໍລິສັດ ກໍ່ສ້າງ ພັດທະນາ ຕິອເມືອງລາວ ຈຳກັດ	ບໍລິສັດໃນເຄືອ	ໜີ້ຕ້ອງສິ່ງ	1,320,000,000	1,320,000,000
ທ່ານ ເມ້ຍ ເຫຼີຍ	ຜູ້ອຳນວຍການໃຫຍ່	ກູ້ຢືມ (*)	3,157,387,500	3,605,450,000
			11,968,699,773	**12,887,018,084**

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ໜີ້ຕ້ອງສົ່ງອື່ນໆ *(ປົດອະທິບາຍເລກທີ 15)*

Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	7,736,383,104	7,736,383,104
ລັດວິສາຫະກິດພັດທະນາກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	5,844,980,856	5,844,980,856
			13,581,363,960	**13,581,363,960**

Other payables (Note 15)

Mr. Li Xue Bing	ຮອງຜູ້ອຳນວຍການ	ກູ້ຢືມ (*)	3,813,022,500	3,835,590,000
Mr. Wang Hui	ຜູ້ອຳນວຍການ	ກູ້ຢືມ (*)	-	222,564,810
Mr. Ding Yu Dong	ຜູ້ອຳນວຍການ	ກູ້ຢືມ (*)	200,000,000	58,370,000
HK XIANGHUA LIMITED NO4	ພາກສ່ວນທີ່ກ່ຽວຂ້ອງ	ກູ້ຢືມ (**)	14,552,401,448	6,501,000,000
		ດອກເບ້ຍກູ້ຢືມ	549,776,448	-
			18,565,423,948	**10,617,524,810**

(*) ການກູ້ຢືມນີ້ສະແດງເຖິງການກູ້ຢືມບໍ່ມີຫຼັກຊັບຄ້ຳປະກັນ, ທີ່ບໍ່ມີດອກເບ້ຍ, ບໍ່ກຳນົດໄລຍະເວລາ
(**) ນັບຈາກວັນທີ 1 ມັງກອນ 2025, ການກູ້ຢືມນີ້ສະແດງເຖິງການກູ້ຢືມທີ່ມີດອກເບ້ຍ 10% ຈົນຮອດມື້ຄົບກຳນົດ 30 ທັນວາ 2025.

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະອຳນວຍການພາຍໃນໄລຍະມີດັ່ງລຸ່ມນີ້:

	ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2025 ກີບ	*ສຳລັບປີສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ*
ເງິນເດືອນ	1,146,565,652	1,362,011,558
	1,146,565,652	**1,362,011,558**

23. ພັນທະສັນຍາ

ມາຮອດວັນທີ 30 ມິຖຸນາ 2025, ກຸ່ມບໍລິສັດດັ່ງກ່າວໄດ້ລົງນາມໃນສັນຍາຮ່ວມມືລົງທຶນໂຄງການກໍ່ສ້າງ 21 ໃຕ້ຕາມສັນຍາ ສະບັບເລກທີ LCTC-E25011 ກັບຜູ້ລົງທຶນບໍລິສັດ ລາວໂຈ່ວຊິງ ອຸດສາຫະກຳ ຈຳກັດ ("LYX"). ດ້ວຍເຫດນັ້ນ, ໃນຊຸມປີ ຕໍ່ໜ້າ, ກຸ່ມບໍລິສັດໄດ້ຕົກລົງຈະຈ່າຍ LYX 8 ລ້ານ USD ໃຫ້ແກ່ການຂາຍອາຄານ, ພ້ອມກັບຈຳນວນເງິນເພີ່ມເຕີມອີກ 4 ລ້ານ USD ໂດຍອີງໃສ່ຜົນກຳໄລຂອງໂຄງການ.

ບໍລິສັດມີບໍລິສັດໃນເຄືອ 8 ບໍລິສັດ ໂດຍມີທຶນຈົດທະບຽນທັງໝົດ 43 ຕື້ກີບ ນະວັນທີ 30 ມິຖຸນາ 2025. ບໍລິສັດໄດ້ລົງທຶນ 5.8 ຕື້ກີບ ແລະ ຈຳນວນເງິນລົງທຶນທີ່ຍັງບໍ່ທັນໄດ້ປະກອບສ່ວນເຂົ້າໃນພັນທະສັນຍາປະກອບທຶນຂອງບໍລິສັດໃນເຄືອ ຈຳນວນ 37.2 ຕື້ກີບ.

24. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 30 ມິຖຸນາ 2025 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນ ເອກະສານລາຍງານການເງິນແບບແຍກກິດຈະການ.

25. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນແບບແຍກກິດຈະການນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2025 ແມ່ນໄດ້ຖືກອະນຸມັດໂດຍຄະນະອຳນວຍການຂອງບໍລິສັດ ໃນວັນທີ 25 ສິງຫາ 2025

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ທ່ານ ເນ້ຍ ເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈຶ່ງຫົວ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

29 ສິງຫາ 2025